# ບົດຂ່າວ
# ກອງປະຊຸມທົບທວນຜົນການດຳເນີນທຸລະກິດ ປະຈຳໄຕມາດ 3 ປີ 2016
# ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ






ໃນວັນທີ 20-21 ຕຸລາ 2016, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ມີການຈັດກອງປະຊຸມທົບທວນທົ່ວລະບົບ ທຄຕລ ຂຶ້ນປະຈຳໄຕມາດ 3 ປີ 2016. ກອງປະຊຸມໄດ້ຈັດຂຶ້ນພາຍໃຕ້ການເປັນປະທານ ຂອງ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ມີຜູ້ເຂົ້າຮ່ວມຂັ້ນ ຄະນະອຳນວຍການ, ຄະນະພະແນກ, ຄະນະສາຂາ ແລະ ພະນັກງານທີ່ກ່ຽວຂ້ອງ ຈຳນວນ 70 ທ່ານ.

ກອງປະຊຸມໄດ້ດຳເນີນໄປເປັນເວລາ 2 ວັນ, ຈຸດປະສົງແມ່ນເພື່ອປະເມີນຜົນການດຳເນີນທຸລະກິດ ຂອງ ທຄຕລ ປະຈຳໄຕມາດ 3/2016 ເຊິ່ງກອງປະຊຸມໄດ້ມີການປຶກສາຫາລືໃນຫລາຍຫົວຂໍ້ທີ່ສຳຄັນຄື: ການລາຍງານຜົນການດຳເນີນທຸລະກິດປະຈຳໄຕມາດ 3/2016, ທົບທວນຜົນການດຳເນີນທຸລະກິດ ປະຈຳໄຕມາດ 3/2016, ສະເໜີແຜນການປີ 2017 ແລະ ການແລກປ່ຽນບົດຮຽນຮ່ວມກັນລະຫວ່າງສຳນັກງານໃຫຍ່ ກັບ ສາຂາ ເພື່ອແກ້ໄຂຂໍ້ຄົງຄ້າງ ແລະ ເຮັດໃຫ້ສາມາດບັນລຸໄດ້ເປົ້າໝາຍທຸລະກິດ ປະຈຳປີ 2016.